**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ**

ມະຫາວິທະຍາໄລແຫ່ງຊາດ

ຄະນະວິທະຍາສາດປ່າໄມ້

ເລກທີ 283/ຄປມ

ນະຄອນຫຼວງວຽງຈັນ, ວັນທີ 26/3/2026

# ໜັງສືແຈ້ງການ

**ຮຽນ:** ຫົວໜ້າພາກວິຊາ, ຫົວໜ້າພະແນກ, ຄູ-ອາຈານ, ນັກສຶກສາ ທັງພາຍໃນ ແລະ ພາຍນອກ ຄະນະວິທະຍາສາດປ່າໄມ້, ມະຫາວິທະຍາໄລແຫ່ງຊາດ.

**ເລື່ອງ:** ເປີດຮັບບົດຄວາມວາລະສານການຄົ້ນຄ້ວາວິທະຍາສາດທີ່ຈະຕີພິມໃນ ວາລະສານຮົ່ມຂຽວ ຂອງຄະນະວິທະຍາສາດປ່າໄມ້ ປະຈໍາປີ 2026.

- ອີງຕາມ: ຂໍ້ຕົກລົງຂອງອະທິການບໍດີວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວ ຂອງ ຄະນະວິທະຍາສາດປ່າໄມ້, ມະຫາວິທະຍາໄລແຫ່ງຊາດ ສະບັບລກທີ 849/ມຊ.ຈຕ, ລົງວັນທີ 28 ກຸມພາ 2013.
- ອີງຕາມ ຂໍ້ກໍານົດວ່າດ້ວຍວາລະສານຄະນະວິທະຍາສາດປ່າໄມ້ (ຮົ່ມຂຽວ) ສະບັບເລກທີ 904/ຄປມ ລົງວັນທີ 2 ຕຸລາ 2023.
- ອີງຕາມ: ແຜນການເຄື່ອນໄຫວປະຈໍາປີ 2026 ຂອງ ພະແນກຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ, ຄະນະວິທະຍາສາດປ່າໄມ້

ຫົວໜ້າຄະນະວິຊາ ຄະນະວິທະຍາສາດປ່າໄມ້ ຂໍຖືເປັນກຽດຮຽນສະເໜີມາຍັງທ່ານ ຫົວໜ້າພາກວິຊາ, ຫົວໜ້າພະແນກ, ຄູ-ອາຈານ ທັງພາຍໃນ ແລະ ພາຍນອກ ຄະນະວິທະຍາສາດປ່າໄມ້, ມະຫາວິທະຍາໄລແຫ່ງຊາດ. ຜູ້ທີ່ສົນໃຈຈະຕີພິມບົດຄວາມລົງ ວາລະສານຮົ່ມຂຽວ (Green Shadow) ຂອງ ຄະນະວິທະຍາສາດປ່າໄມ້ ປະຈໍາປີ 2026. ເຊິ່ງຈະໄດ້ເປີດຮັບບົດຄວາມລົງ ວາລະສານການຄົ້ນຄ້ວາວິທະຍາສາດໃນແຕ່ລະຊ່ວງເວລາ ດັ່ງລຸ່ມນີ້:

- ເປີດຮັບບົດວາລະສານ ຊ່ວງທີ 1: ເລີ່ມ 1-31 ມັງກອນ 2026
  ຊ່ວງທີ 2: ເລີ່ມ 1-30 ເມສາ 2026
  ຊ່ວງທີ 3: ເລີ່ມ 1-31 ກໍລະກົດ 2026
  ຊ່ວງທີ 4: ເລີ່ມ 1-31 ຕຸລາ 2026
- ເຜີຍແຜ່ບົດວາລະສານ: ຊ່ວງທີ 1 ເດືອນ ມິຖຸນາ ແລະ ຊ່ວງທີ 2 ເດືອນ ທັນວາ ຂອງທຸກປີ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອໃຫ້ຊາບ ແລະ ສົ່ງບົດວາລະສານຕາມກໍານົດເວລາດ້ວຍ.

ຮຽນມາດ້ວຍຄວາມນັບຖືຢ່າງສູງ.

**ຫົວໜ້າຄະນະວິຊາ**

**ສຈ. ປອ. ສີທອງ ທອງມະນີວົງ**

ດາວໂລດເອກະສານຄັດຕິດ:

ຕິດຕໍ່ພົວພັນພະແນກຄົ້ນຄ້ວາວິທະຍາສາດ ແລະ ບໍລິການວິຊາການ:
ປທ ວັນສະເຫຼີມ ແພງວິຈິດ 020 98888969, ອີເມວ: v.phengvichith@nuol.edu.la
ປທ ເມັດມະນີ ສຸຂະວົງ 020 29898689, ອີເມວ: m.soukhavong@nuol.edu.la